# ກອງປະຊຸມເຜີຍແຜ່ດຳລັດ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອ



ກະຊວງການເງິນ ໄດ້ຮ່ວມກັບບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຈັດກອງປະຊຸມເຜີຍແຜ່ດຳລັດ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອ ຂຶ້ນໃນຕອນເຊົ້າຂອງວັນຈັນ, ວັນທີ 05 ກັນຍາ 2022 ທີ່ຫ້ອງປະຊຸມຊັ້ນ 2 ຕຶກອາກອນ, ກະຊວງການເງິນ ໂດຍການໃຫ້ກຽດເປັນປະທານຮ່ວມລະຫວ່າງ ທ່ານ ສົມຈິດ ຄຳມຸງຄຸນ ຮອງຫົວໜ້າຫ້ອງການ, ກະຊວງການເງິນ ແລະ ທ່ານ ນາງ ວິນຄຳ ລຸນທອນ ຜູ້ອຳນວຍການໃຫຍ່ ບໍລິສັດ ຂສລ ແລະ ມີບັນດາກົມພາຍໃນກະຊວງການເງິນ, ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ ແລະ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເຂົ້າຮ່ວມທັງໝົດຈຳນວນ 60 ທ່ານ.

ຈຸດປະສົງຂອງກອງປະຊຸມແມ່ນຈັດຂຶ້ນເພື່ອເຜີຍແຜ່ດຳລັດ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ໄດ້ຮັບຮູ້ເຂົ້າໃຈ ຄວາມສຳຄັນຈຳເປັນ ທີ່ຕ້ອງໄດ້ເກັບກຳຂໍ້ມູນ ແລະ ພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ຂອງ ສປປ ລາວ ເພື່ອໃຫ້ສາມາດຕອບສະໜອງຂໍ້ມູນທີ່ຄົບຖ້ວນ, ມີຄຸນນະພາບ ແລະ ຫຼາກຫຼາຍ ໃຫ້ແກ່ບັນດາສະຖາບັນການເງິນ, ພາກລັດ ແລະ ສັງຄົມ ເພື່ອນຳໃຊ້ເຂົ້າໃນວຽກງານຕ່າງໆ ຢ່າງມີປະສິດທິພາບ.





ໃນກອງປະຊຸມດັ່ງກ່າວ ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ ໄດ້ນຳສະເໜີດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ລບ, ລົງວັນທີ 19 ກໍລະກົດ 2019. ຈາກນັ້ນ, ທ່ານ ນ. ເພັດລຳພອນ ຄຳນໍເພັດ ຮອງຜູ້ອຳນວຍການ ບໍລິສັດ ຂສລ ກໍໄດ້ນຳສະເໜີ ຄວາມເປັນມາ, ພາລະບົດບາດ ແລະ ຄວາມສຳຄັນຂອງວຽກງານຂໍ້ມູນຂ່າວສານສິນເຊື່ອ ໂດຍສະເພາະແມ່ນຄວາມສຳຄັນໃນການເກັບກຳຂໍ້ມູນຈາກພາກສ່ວນກ່ຽວຂ້ອງ ເພື່ອເປັນການຈັດຕັ້ງປະຕິບັດຕາມ ດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ, ຄຳສັ່ງຂອງນາຍົກລັດຖະມົນຕີສະບັບເລກທີ 02/ນຍ ແລະ ການປະເມີນຂອງທະນາຄານໂລກ ກ່ຽວກັບສະພາບການດຳເນີນທຸລະກິດຢູ່ ສປປ ລາວ ເຊິ່ງພາລະບົດບາດຂອງບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແມ່ນເຮັດໜ້າທີ່ໃນການເກັບກຳຂໍ້ມູນຈາກພາກສ່ວນຕ່າງໆ ທັງອີງການຈັດຕັ້ງລັດ ແລະ ບໍລິສັດ ສາທາລະນຸປະໂພກ. ພ້ອມດຽວກັນນັ້ນ, ກໍຕ້ອງດຳເນີນການຄົ້ນຄວ້າສ້າງຜະລິດຕະພັນທີ່ຫຼາກຫຼາຍຮັບໃຊ້ສັງຄົມ. ສະນັ້ນ, ເພື່ອປະຕິບັດຕາມຄຳສັ່ງ, ລະບຽບການກ່ຽວຂ້ອງ ແລະ ເພື່ອພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຈຶ່ງມີຄວາມຈຳເປັນຕ້ອງໄດ້ເກັບກຳຂໍ້ມູນຈາກຊວງການເງິນ ເປັນຕົ້ນແມ່ນຂໍ້ມູນເລກປະຈຳຕົວຜູ້ເສຍພາສີອາກອນ ຂອງບັນດາບໍລິສັດທີ່ຕັ້ງຢູ່ ສປປ ລາວ ແລະ ຂໍ້ມູນຖານະການເງິນ ເຊິ່ງຂໍ້ມູນຕ່າງໆ ແມ່ນຈະຖືກນຳໃຊ້ ເພື່ອສ້າງຜະລິດຕະພັນການຈັດອັນດັບຄວາມໜ້າເຊື່ອຖືຂອງວິສາຫະກິດ ແລະ ເພື່ອກວດສອບຄວາມຖືກຕ້ອງຂອງຂໍ້ມູນທີ່ໄດ້ຈາກສະມາຊິກເຮັດໃຫ້ຂໍ້ມູນມີຄຸນນະພາບ ທັງນີ້ກໍເພື່ອໃຫ້ຂໍ້ມູນຂ່າວສານສິນເຊື່ອ ກາຍເປັນສູນກາງໃນການແລກປ່ຽນຂໍ້ມູນທີ່ຕິດພັນກັບວຽກງານຂໍ້ມູນຂ່າວສານສິນເຊື່ອເພື່ອນຳມາສ້າງຜະລິດຕະພັນໃຫ້ໄດ້ຕາມ ມາດຕະຖານສາກົນ ທີ່ມີຄວາມຄົບຖ້ວນ, ມີຄຸນນະພາບ, ມີຄວາມທັນສະໄໝ, ຮັບປະກັນຄວາມປອດໄພດ້ານຂໍ້ມູນຂ່າວສານສິນເຊື່ອ ກ້າວໄປສູ່ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃນອະນາຄົດ ໃຫ້ສາມາດປະກອບສ່ວນເຂົ້າໃນການກຳນົດນະໂຍ ບາຍເງິນຕາຂອງພາກລັດ ແນ່ໃສ່ເພື່ອຮັກສາຄວາມມີສະຖຽນລະພາບທາງດ້ານການເງິນ-ເງິນຕາ, ຄຸ້ມຄອງບັນດາສະຖາບັນການເງິນ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສັງຄົມສາມາດເຂົ້າເຖິງສິນເຊື່ອໄດ້ງ່າຍຂຶ້ນ ແລະ ສົ່ງເສີມໃຫ້ສັງຄົມມີວິໄນທາງດ້ານການເງິນ ເຊິ່ງຂໍ້ມູນຂ່າວສານສິນເຊື່ອຖືໄດ້ວ່າເປັນຂໍ້ມູນພື້ນຖານໃນການພິຈາລະນາ ເປັນຕົ້ນແມ່ນ: ນຳໃຊ້ເຂົ້າໃນການວິເຄາະ

 

ຄວາມສ່ຽງທາງດ້ານສິນເຊື່ອກ່ອນການອະນຸມັດເງິນກູ້, ທົບທວນ, ປັບໂຄງສ້າງໜີ້, ແຈ້ງເຕືອນເງິນກູ້ທີ່ມີຄວາມສ່ຽງ, ກໍານົດຜະລິດຕະພັນ, ການຕະຫຼາດຂອງຕົນ ແລະ ນໍາໃຊ້ຂໍ້ມູນຂ່າວສານສິນເຊື່ອເຂົ້າໃນວຽກງານອື່ນ ແລະ ໃນຕອນທ້າຍຂອງກອງປະຊຸມ ທ່ານ ສົມຈິດ ຄໍາມຸງຄຸນ ຮອງຫົວໜ້າຫ້ອງການ, ກະຊວງການເງິນ ກໍໄດ້ມີຄໍາເຫັນຕໍ່ກອງປະຊຸມ ເຊິ່ງເຫັນໄດ້ຄວາມສໍາຄັນຂອງວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ໃຫ້ບັນກົມທີ່ກ່ຽວຂ້ອງຂອງກະຊວງການເງິນ ສືບຕໍ່ໃຫ້ການຮ່ວມມື ແລະ ເຮັດວຽກຮ່ວມກັບ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນການສະໜອງຂໍ້ມູນທີ່ຕິດພັນ ເປັນຕົ້ນແມ່ນຂໍ້ມູນເລກປະຈໍາຕົວຜູ້ເສຍພາສີອາກອນ ຂອງບັນດາບໍລິສັດທີ່ຕັ້ງຢູ່ ສປປ ລາວ ແລະ ຂໍ້ມູນຖານະການເງິນ ເພື່ອນໍາໃຊ້ເຂົ້າໃນການສ້າງຜະລິດຕະພັນການຈັດອັນດັບຄວາມໜ້າເຊື່ອຖືຂອງວິສາຫະກິດ ແລະ ເພື່ອກວດສອບຄວາມຖືກຕ້ອງຂອງຂໍ້ມູນໃນຖານຂໍ້ມູນຂ່າວສານສິນເຊື່ອ ໃຫ້ມີຄຸນນະພາບ.



≠ ບົດຂ່າວ: ບໍລິສັດ ຂສລ